ສະມາຄົມລາວພັດທະນາຊັບພະຍາກອນມະນຸດໃນເຂດຊົນນະບົດ (ສພຊບ)
Lao Development of Human Resources in Rural Areas Association (LaoDHRRA)
House No: 175, Ban Hongsouphap, Xaysettha District, Vientiane Capital, Lao PDR
Tel/Mob: (856) 20 – 2222 7595; 9977 9394
Email: laocso.flegt@gmail.com; website: https://asiadhrra.org/
Facebook: Loa CSO FLEGT and Lao Development of Human Resources in Rural Areas Association

# ປະກາດຮັບພະນັກງານ

**ຕໍາແໜ່ງ**: ພະນັກງານວິຊາການສະເພາະດ້ານ (Project Technical) 01 ຕໍາແໜ່ງ
**ໄລຍະເວລາ:** 01 ປີ
**ບ່ອນປະຈໍາການ:** ນະຄອນຫຼວງວຽງຈັນ, ໄປຕ່າງແຂວງເປັນບາງຄັ້ງ
**ປິດຮັບສະໝັກ:** 22 ກັນຍາ 2023, ເວລາ 17:00 ນາທີ

ສະມາຄົມລາວພັດທະນາຊັບພະຍາກອນມະນຸດໃນເຂດຊົນນະບົດ (ສພຊບ/LaoDHRRA) ແມ່ນສະມາຄົມບໍ່ຫວັງຜົນກໍາໄລ (NPA) ທີ່ຂຶ້ນທະບຽນກັບກະຊວງພາຍໃນ, ສພຊບ ມີຄວາມປາດສະໜາເພື່ອສະໜັບສະໜູນ ນະໂຍບາຍຫລຸດຜ່ອນຄວາມທຸກຍາກຂອງປະຊາຊົນໃນເຂດຊົນນະບົດ ແລະ ເປົ້າໝາຍການພັດທະນາເສດຖະກິດສັງຄົມໃນວຽກງານການລົງທຶນທີ່ມີຄວາມຮັບຜິດຊອບດ້ານກະສິກໍາ (RAI) ແລະ ປ່າໄມ້ ແບບຍືນຍົງ ຂອງ ລັດຖະບານ ແຫ່ງ ສປປ ລາວ ໃຫ້ບັນລຸຜົນສໍາເລັດໃນຕໍ່ໜ້າ. ສພຊບ ພວກເຮົາມີຄວາມຕ້ອງການພະນັກງານວິຊາການສະເພາະດ້ານ ຈໍານວນ 01 ຕໍາແໜ່ງ.

**<u>ໜ້າທີຫຼັກ:</u>**

- ປະສານງານກັບ ຄະນະຊີ້ນໍາແຟັກຕີ, ແລະ ສະມາຊິກແຟັກຕີ ເພື່ອເຂົ້າຮ່ວມກອງປະຊຸມ, ເຝິກອົບຮົມສ້າງຄວາມອາດສາມາດ
- ກະກຽມຈຸດປະສົງ, ເປົ້າໝາຍ, ວາລະ, ສະຖານທີປະຊຸມ, ຜູ້ເຂົ້າຮ່ວມຝຶກອົບຮົມ, ງົບປະມານຂອງກອງປະຊຸມ, ສ້າງ-ສົ່ງບັດເຊີນເຂົ້າຂອງກອງປະຊຸມຕ່າງໆ,
- ກະກຍມ ແລະ ເຂົ້າຮ່ວມປະຊຸມກັບຫ້ອງການປະສານງານ FSO-MAF, GIZ ProFEB, ຜູ້ໃຫ້ທຶນ ແລະ ເພື່ອນຮ່ວມງານອື່ນໆທີ່ກ່ຽວຂ້ອງ,
- ກະກຽມ ແລະ ເຂົ້າຮ່ວມປະຊຸມວິຊາການຕ່າງກ່ຽວກັບວຽກງານແຟັກຕີ (FLEGT-VPA, TWG, TEG, TLDs),
- ອໍານວຍຄວາມສະດວກ ກອງປະຊຸມ ວຽກງານແຟັກຕີ ແລະ ປະສານງານກັບ ສະມາຊິກ ແລະ ຄະນະຊີ້ນໍາແຟັກຕີ,
- ອັບເດດຄວາມຄືບໜ້າວຽກງານາແຟັກຕີໃຫ້ ສະມາຊິກ ແລະ ຄະນະ, ຜູ້ປະສານງານໂຄງການ ແລະ ເພື່ອນຮ່ວມງານທີ່ກ່ຽວຂ້ອງ,
- ຊ່ວຍອັບເດດວຽກງານແຟັກຕີຈາກ CSOs ຕໍ່ທາງ ຫ້ອງການປະສານງານ FSO-MAF.

**<u>ຄຸນນະວຸດ ແລະ ໝາດຖານຕ້ອງການ</u>**:

- ຈົບປະລິນຍາຕີ ຫຼື ທຽມເທົ່າ ໃນສາຂາ ກົດໝາຍ, ປ່າໄມ້, ກະສິກໍາ ຫຼື ອື່ນໆທີ່ມີປະສົບການກ່ຽວຂ້ອງ.
- ສັນຊາດລາວ ອາຍຸລະຫວ່າງ 25 ຫາ 45 ປີ
- ມີປະສົບການທີ່ກ່ຽວຂ້ອງກັບການສະເນີມາຂ້າງເທິງ ຢ່າງໜ້ອຍ 03 ປີ
- ເຄີຍເຮັດວຽກນໍາພາກລັດ, ອົງການສາກົນ ຫຼື ສະມາຄົມ,
- ສາມາດນໍາໃຊ້ຄອມພິວເຕີໃນລະດັບດີ (Word, excel, PowerPoint and email ຫຼືອື່ນໆ),
- ສາມາດເວົ້າ ຫຼື ຂຽນພາສາອັງກິດໃນລະດັບດີພໍສົມຄວນ,
- ມີສຸຂະພາບແຂງແຮງດີ ສາມາດເດີນທາງເຮັດວຽກຢູ່ເຂດຫ່າງໄກຊອກຫຼີກ ຫຼື ຕ່າງແຂວງໄດ້,
- ມີຄວາມສາມາດເຮັດວຽກເປັນທີມ, ເປັນເຈົ້າການ, ມີຄວາມຮັບຜິດຊອບສູງ, ມີຈິດອາສາ, ອັດທະຍາໄສດີ, ມີທັກສະການສື່ສານ, ມີຄວາມມຸ້ງໝັ້ນໃນການເຮັດວຽກ, ຕົງຕໍ່ເວລາ ແລະ ມີຄວາມຕັ້ງໃຈໃນການຮຽນຮູ້ສິ່ງໃໝ່ໆ ແລະ ມີຄວາມໝັ້ນໃຈ
- ມີໃບຂັບຂີ່ລົດຈັກ, ຖ້າມີໃບຂັບຂີ່ລົດໃຫຍ່ຍິ່ງເປັນການດີ,
- ສາມາດເຮັດວຽກໄດ້ ພາຍໃນເດືອນ 9 ປີ 2023 ນີ້ເປັນຕົ້ນໄປ.

**<u>ຂໍ້ມູນໃນການສະໝັກ:</u>** ທ່ານທີສົນໃຈສາມາດຍື່ນຄໍາຮ້ອງ ຫຼື ໜັງສືສະເໜີ ໂດຍມີເນື້ອຫາ ອະທິບາຍຕົນເອງ ມີຄວາມເໝາະສົມກັບຕໍາແໜ່ງນີ້ແນວໃດ, ມີຄວາມມຸ້ງໝັ້ນ, ຄວາມສາມາດ ແລະ ທັກສະທີ່ແທດເໝາະກັບຕໍາແໜ່ງດັ່ງກ່າວ ພ້ອມດ້ວຍ ຊີວະປະຫວັດ (CV) ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງ ຍືນທາງອອນລາຍ ມາທີອີເມວ: laocso.flegt@gmail.com ຫຼື ສາມາດສອບຖາມໄດ້ທີເບີໂທ/WhatsApp: 020 2222 7595 (ນາງ, ຄໍາບາງ ທິບພະວົງ)

**ໝາຍເຫດ: ມີພຽງຜູ້ທີ່ຖືກຄັດເລືອກເພື່ອສໍາພາດເທົ່ານັ້ນຈະຖືກຕິດຕໍ່ກັບໄປຫາ. ສ່ວນເອກະສານທີ່ສົ່ງມາຈະບໍ່ໄດ້ສົ່ງກັບຄືນ**